*Souphanouvong University Journal of Multidisciplinary Research and Development*
*2024, Vol. 10, No. 4, 258-265*
*https://doi.org/10.69692/SUJMRD1004258*

# The Development of the Research Management System of National University of Laos

**Vannasouk BOUASANGTHONG*1, Khamseng THALANGSY1, Intong LEUSINXAY2**

*Faculty of Education, National University of Laos, Lao PDR*

***Correspondence:** Vannasouk BOUASANGTHONG, Faculty of Education, National University of Laos, Tel: **+856 20 54969456**, Email: vannasouk_bst@yahoo.com

***Submitted: November 03, 2024***
***Revised: November 28, 2024***
***Accepted: December 10, 2024***

**Abstract**

This study aimed to develop the research management system at the National University of Laos (NUOL) through a structured research and development approach, conducted in four phases. Phase one defined the components and indicators of NUOL's research management system, involving nine administrators from the Research Office and Research and Academic Service Division. Phase two assessed the current system, surveying 306 administrators and faculty members across 13 faculties. In phase three, an optimized system was developed with input from 17 key figures, including NUOL's vice president, research division heads, and national research committee members. Phase four evaluated the system with 48 participants, including division heads and faculty staff.

Data collection involved semi-structured interviews and questionnaires, analyzed using frequency, percentage, means, standard deviation, interquartile range, and content analysis. Findings revealed:

1. NUOL's research management system comprises four components and 65 indicators: 14 for input, 42 for process (5 sub-processes), 5 for output, and 4 for feedback.
2. The current system showed suitable input but faced challenges like budget constraints and unstructured research guidance. Processes were applied consistently but had monitoring, evaluation, and utilization issues. Outputs were satisfactory but required improved reliability, while feedback practices faced challenges.
3. The optimized system includes four components with 61 indicators: Input (13), Process (40 across 5 sub-processes), Output (4), and Feedback (4).
4. Evaluation results indicated that the system achieved the highest utility and feasibility ratings and high propriety and accuracy ratings.

In conclusion, the developed system with 61 indicators across four elements was validated by research experts, addressing challenges in implementation and improving research management effectiveness at NUOL.

**Keywords:** *Research Management, Research Management System, Research Mechanism, Research Process, National University of Laos*

## 1. ພາກສະເໜີ

ການພັດທະນາຊັບພະຍາກອນມະນຸດຖືວ່າເປັນໜຶ່ງໃນບັນດາວຽກທີ່ເປັນບູລິມະສິດ ທີ່ເປັນປັດໄຈສໍາຄັນໃນການຊຸກຍູ້ການພັດທະນາເສດຖະກິດ-ສັງຄົມຕາມຄວາມຮຽກຮ້ອງຕ້ອງການໃນແຕ່ລະໄລຍະ (National Assembly, 2021, p. 119). ເພື່ອເປັນການຍົກລະດັບການສ້າງຄວາມເຂັ້ມແຂງໃຫ້ແກ່ການພັດທະນາຊັບພະກອນມະນຸດ, ລັດຖະບານຈິ່ງໄດ້ມີການປະກາດ ນໍາໃຊ້ດໍາລັດວ່າດ້ວຍຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດຮອດປີ 2025 ແລະ ກໍານົດວິໄສທັດຮອດປີ 2030 ໂດຍລະບຸວ່າ "ພັດທະນາຊັບພະຍາກອນມະນຸດໃຫ້ເປັນກໍາລັງການຜະລິດຕົ້ນຕໍ ທີ່ສາມາດຕອບສະໜອງຕໍ່ການພັດທະນາເສດຖະກິດ-ສັງຄົມຢ່າງຍືນຍົງຕາມທິດທັນເປັນອຸດສາຫະກໍາ ແລະ ທັນສະໄໝ, ສາມາດເຊື່ອມໂຍງ ແລະ ແຂ່ງຂັນກັບພາກພື້ນ ແລະ ສາກົນ" (Ministry of Education and Sports, 2016, p. 14). ຈາກຍຸດທະສາດ ແລະ ວິໄສທັດຂອງລັດຖະບານ, ກະຊວງສຶກສາທິການ ແລະ ກິລາກໍໄດ້ນໍາເອົາແນວທາງນະໂຍບາຍດັ່ງກ່າວມາຈັດຕັ້ງຜັນຂະຫຍາຍ ເພື່ອການພັດທະນາຂະແໜງ ການສຶກສາຂອງຕົນ ໂດຍໄດ້ລະບຸວ່າການພັດທະນາຊັບພະຍາກອນມະນຸດຕ້ອງໃຫ້ບັນລຸຕາມ 3 ລັກສະນະ ແລະ 5 ຫຼັກມູນສຶກສາ ພ້ອມທັງຮັບປະກັນໃຫ້ມີຄວາມຮູ້-ຄວາມສາມາດ, ມີທັກສະທາງດ້ານການຄົ້ນຄວ້າວິທະຍາ ສາດ, ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ພາສາຕ່າງປະເທດຢ່າງເປັນຮູບປະທໍາ ເພື່ອປັບຕົວໃຫ້ເຂົ້າກັບສະພາບການປ່ຽນແປງໃໝ່ (Ministry of Education and Sports, 2015, p. 10). ນອກຈາກນີ້, ໃນຍຸດທະສາດການພັດທະນາການສຶກສາຍັງໄດ້ລະບຸອີກວ່າ ວຽກງານການຄົ້ນຄວ້າວິທະຍາສາດໃຫ້ຖືເປັນວຽກງານທີ່ເປັນບູລິມະສິດ ເພື່ອພັດທະນາ

ຄວາມຮູ້ດ້ານວິຊາການ, ຊ່ວຍໃນແກ້ໄຂບັນຫາ, ຊ່ວຍເຂົ້າໃຈພຶດຕິກຳ ແລະ ປະກົດການຕ່າງໆ ພ້ອມກັບຊ່ວຍໃນການກຳນົດນະໂຍບາຍ ແລະ ການວາງແຜນໃນທຸກໆລະດັບ (Ministry of Education and Sports, 2015, p. 13). ເມື່ອເຫັນໄດ້ເຖິງຄວາມສຳຄັນດັ່ງກ່າວ, ກະຊວງສຶກສາທິການ ແລະ ກິລາກໍໄດ້ສືບຕໍ່ສົ່ງເສີມວຽກງານການຄົ້ນຄວ້າວິທະຍາສາດຢ່າງເປັນລະບົບ ແລະ ຕໍ່ເນື່ອງ ໂດຍໄດ້ກຳນົດວຽກຈຸດສຸມຕ່າງໆທີ່ກ່ຽວຂ້ອງກັບການຄົ້ນຄວ້າວິທະຍາສາດເຊັ່ນ: ການໃຫ້ການສະໜັບສະໜູນທາງດ້ານງົບປະມານ, ການຈັດການຮຽນ-ການສອນ ແລະ ການຝຶກອົບຮົມດ້ານການຄົ້ນຄວ້າວິທະຍາສາດໃຫ້ຄູ-ອາຈານ ແລະ ນັກສຶກສາ, ການຕິດຕາມ ແລະ ປະເມີນຜົນການເຮັດການຄົ້ນຄວ້າວິທະຍາສາດ ລວມໄປເຖິງການອອກລະບຽບ ແລະ ນິຕິກຳຕ່າງໆໃນການຄຸ້ມຄອງການຄົ້ນຄວ້າວິທະຍາສາດ ເພື່ອໃຫ້ມີປະສິດທິພາບ ແລະ ປະສິດທິຜົນໃນການຈັດຕັ້ງປະຕິບັດ. ນອກຈາກນີ້, ກະຊວງສຶກສາທິການ ແລະ ກິລາ ໂດຍສະເພາະກົມການສຶກສາຊັ້ນສູງກໍຍັງໄດ້ມີແຜນໃນການສ້າງຖານຂໍ້ມູນການຄົ້ນຄວ້າວິທະຍາສາດ ແລະ ພັດທະນາເວັບໄຊ້ເພື່ອຄຸ້ມຄອງ ແລະ ເຜີຍແຜ່ການຄົ້ນຄວ້າວິທະຍາສາດຂອງການສຶກສາຊັ້ນສູງ, ການສ້າງສູນການຄົ້ນຄວ້າວິທະຍາສາດ, ການສ້າງເຄືອຂ່າຍການຄົ້ນຄວ້າວິທະຍາສາດລະຫວ່າງມະຫາວິທະຍາໄລພາຍໃນ ແລະ ສາກົນ ແລະ ມອບໃຫ້ມະຫາວິທະຍາໄລເປັນສູນລວມໃນການສ້າງຄວາມເຂັ້ມແຂງທາງດ້ານການຄົ້ນຄວ້າວິທະຍາສາດຂອງກະຊວງສຶກສາທິການ ແລະ ກິລາ (Ministry of Education and Sports, 2019; Ministry of Education and Sports, 2021).

ເພື່ອສືບຕໍ່ພາລະກິດທີ່ໄດ້ຮັບມອບໝາຍຈາກຂັ້ນເທິງ, ມະຫາວິທະຍາໄລມີໜ້າທີ່ໃນການເປັນເສນາທິການ ໃນການນຳເອົາແນວທາງນະໂຍບາຍກ່ຽວກັບວຽກງານການຄົ້ນຄວ້າວິທະຍາສາດໄປຈັດຕັ້ງຜັນຂະຫຍາຍ ເປັນຕົ້ນແມ່ນວຽກງານການຄຸ້ມຄອງ ແລະ ສົ່ງເສີມການຄົ້ນຄວ້າວິທະຍາສາດ ໂດຍການສ້າງກົນໄກໃນການຕິດຕາມ, ກວດກາ ແລະ ປະເມີນຜົນການຄົ້ນຄວ້າວິທະຍາສາດໄປພ້ອມກັບການຊອກຫາແຫຼ່ງທຶນ ເພື່ອສະໜອງງົບປະມານ, ການສ້າງວາລະສານ, ການຈັດກອງປະຊຸມເຜີຍແຜ່ຜົນຂອງການຄົ້ນຄວ້າວິທະຍາສາດໃນລະດັບຊາດ ແລະ ສາກົນ ແລະ ການສ້າງເຄືອຂ່າຍການຄົ້ນຄວ້າວິທະຍາສາດ ເພື່ອຍົກສູງຖານະບົດບາດຂອງການສຶກສາ ແລະ ປະເທດຊາດ. ນອກຈາກນັ້ນ ຍັງໄດ້ເລັງເຫັນຄວາມສຳຄັນໃນການພັດທະນາຂີດຄວາມສາມາດໃຫ້ແກ່ນັກຄົ້ນຄວ້າວິທະຍາສາດໜຸ່ມນ້ອຍ ແລະ ປັບປຸງຄຸນນະພາບຂອງການຄົ້ນຄວ້າວິທະຍາ ສາດໃຫ້ສອດຄ່ອງກັບສະພາບ ແລະ ຄວາມຕ້ອງການຂອງສັງຄົມໃນແຕ່ລະໄລຍະ (National University of Laos, 2020, p. 2).

ຜ່ານການຈັດຕັ້ງປະຕິບັດໃນໄລຍະທີ່ຜ່ານມາ ເຫັນວ່າວຽກງານການຄົ້ນຄວ້າວິທະຍາສາດໄດ້ຮັບການພັດທະນາຂຶ້ນຢ່າງເປັນລຳດັບ. ນອກຈາກການໄດ້ຮັບທຶນໃນການຄົ້ນຄວ້າວິທະຍາສາດແລ້ວ, ຄູ-ອາຈານໃນມະຫາວິທະຍາໄລຍັງໄດ້ຮັບການພັດທະນາຂີດຄວາມສາມາດດ້ານການຄົ້ນຄວ້າວິທະຍາສາດຜ່ານການຝຶກອົບຮົມອີກຫຼາຍຫົວຂໍ້ເປັນຕົ້ນແມ່ນການຂຽນບົດສະເໜີໂຄງການຄົ້ນຄວ້າວິທະຍາສາດ, ວິທີວິທະຍາການຄົ້ນຄວ້າວິທະຍາສາດ, ການຂຽນບົດລາຍງານການຄົ້ນຄວ້າວິທະຍາສາດ ແລະ ການຂຽນບົດຄວາມການຄົ້ນຄວ້າເພື່ອຕີພິມລົງໃນວາລະສານວິຊາການອີກຫຼາຍຊຸດ (Department of Higher Education, 2022). ນອກຈາກນີ້, ຜົນສຳເລັດຂອງວຽກງານດັ່ງກ່າວຍັງສະແດງໃຫ້ເຫັນທີ່ການເພີ່ມຂຶ້ນຂອງນັກຄົ້ນຄວ້າໜຸ່ມນ້ອຍພ້ອມກັບການເພີ່ມຂຶ້ນຂອງບົດຄວາມທີ່ຖືກຕີພິມລົງວາລະສານທັງພາຍໃນ ແລະ ຕ່າງປະເທດຂອງຄູ-ອາຈານ (National University of Laos, 2021). ຈາກຜົນສຳເລັດທີ່ຍາດມາໄດ້ນັ້ນ ເຫັນວ່າມະຫາວິທະຍາໄລແຫ່ງຊາດເປັນມະຫາວິທະຍາ ໄລທີ່ຖືວ່າເປັນຕົ້ນແບບ ແລະ ສາມາດເປັນທ່າແຮງໃນການພັດທະນາວຽກງານການຄົ້ນຄວ້າວິທະ ຍາສາດຂອງກະຊວງສຶກສາທິການ ແລະ ກິລາ. ສະນັ້ນ, ກະຊວງສຶກສາທິການ ແລະ ກິລາຈິ່ງໄດ້ມີແຜນການໃນການສ້າງໃຫ້ມະຫາວິທະຍາໄລແຫ່ງຊາດກ້າວເຂົ້າສູ່ຄວາມເປັນເລີດທາງດ້ານການຄົ້ນຄວ້າວິທະຍາສາດ ໂດຍເນັ້ນການພັດທະ ນາລະບົບກົນໄກການບໍລິຫານການຄົ້ນຄວ້າ, ການສ້າງນັກຄົ້ນຄວ້າຮຸ່ນໃໝ່, ການສ້າງສູນການຄົ້ນຄວ້າ ແລະ ພັດທະນາ, ການບໍລິການສັງຄົມ ແລະ ອື່ນໆ (Ministry of Education and Sports, 2021, p. 48).

ເຖິງຢ່າງໃດກໍ່ຕາມ, ເຖິງແມ່ນວ່າວຽກງານການຄົ້ນຄວ້າວິທະຍາສາດໃນມະຫາວິທະຍາໄລແຫ່ງຊາດຈະໄດ້ຮັບການປັງປຸງດີຂຶ້ນຢ່າງຕໍ່ເນື່ອງທັງທາງດ້ານປະລິມານ ແລະ ຄຸນນະພາບໃນໄລຍະຜ່ານມາ, ຄຽງຄູ່ກັບຜົນສຳເລັດດັ່ງ ກ່າວກໍຍັງເຫັນວ່າມີບາງຂໍ້ຄົງຄ້າງ ແລະ ສິ່ງທ້າທາຍທີ່ຈະຕ້ອງໄດ້ຮັບການປັບປຸງແກ້ໄຂ. ຈາກບົດລາຍງານ ພົບວ່າສິ່ງທ້າທາຍໃນການເຮັດການຄົ້ນຄວ້າວິທະຍາສາດເກີດຈາກການຂາດຄວາມຮູ້-ຄວາມສາມາດຂອງນັກຄົ້ນຄວ້າ, ສິ່ງອຳນວຍຄວາມສະດວກ ແລະ ງົບປະມານໃນການຄົ້ນຄວ້າ. ນອກຈາກນັ້ນ, ອີກໜຶ່ງສິ່ງທ້າທາຍຫຼັກໃນການຄົ້ນຄວ້າວິທະຍາສາດແມ່ນລະບົບ ຫຼື ກົນໄກໃນການຄຸ້ມຄອງເຊັ່ນ: ຂະບວນການໃນການຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດ ຕະຫຼອດຮອດການນຳໃຊ້ຜົນຂອງການຄົ້ນຄວ້າ ທີ່ເຫັນວ່າຍັງບໍ່ທັນເປັນລະບົບທີ່ຊັດເຈນໃນການຈັດຕັ້ງປະຕິບັດ (Department of Higher Education, 2022; National Science Council Office, 2023). ຈາກຄວາມສຳຄັນ ແລະ ຄວາມຈຳເປັນຂອງວຽກງານການຄົ້ນຄວ້າທີ່ກ່າວມາຂ້າງເທິງ, ຜູ້ຄົ້ນຄວ້າຈິ່ງມີຄວາມສົນໃຈໃນການພັດທະນາລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ເພື່ອນຳໄປເປັນແນວທາງໃນການບໍລິຫານ ແລະ ຄຸ້ມຄອງການຄົ້ນຄວ້າວິທະຍາສາດໃນ ມຊ ແລະ ສະ ຖານການສຶກສາຊັ້ນສູງທີ່ກ່ຽວຂ້ອງ.

ຈຸດປະສົງຂອງການຄົ້ນຄວ້າແມ່ນພັດທະນາລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ໂດຍຈັດຕັ້ງປະຕິບັດຕາມ 4 ໄລຍະຄື: 1) ສຶກສາອົງປະກອບ ແລະ ຕົວຊີ້ວັດຂອງລະບົບ, 2) ສຶກສາສະພາບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ, 3) ພັດທະນາລະບົບການບໍລິຫານການຄົ້ນຄວ້າວິທະ ຍາສາດຂອງ ມຊ, 4) ປະເມີນລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ).

## 2. ອຸປະກອນ ແລະ ວິທີການ

ການຄົ້ນຄວ້າຫົວຂໍ້ "ການພັດທະນາລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ" ເປັນຮູບແບບຂອງການຄົ້ນຄວ້າ ແລະ ພັດທະນາ (Research and Development) ໂດຍແບ່ງອອກເປັນ 4 ໄລຍະຄື: ໄລຍະທີ 1 ເປັນການຄົ້ນຄວ້າໃນຮູບແບບການສັງເຄາະເອກະສານ, ທິດສະດີ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ ເພື່ອສຶກສາອົງປະກອບ ແລະ ຕົວຊີ້ວັດຂອງລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ. ນອກຈາກນີ້, ຂໍ້ມູນທາງດ້ານອົງປະກອບ ແລະ ຕົວຊີ້ວັດຂອງລະບົບການບໍລິຫານການຄົ້ນຄວ້າວິທະຍາສາດດັ່ງກ່າວຍັງໄດ້ຈາກການເກັບກຳຂໍ້ມູນຜ່ານການສຳພາດຜູ້ບໍລິຫານທີ່ກ່ຽວຂ້ອງກັບວຽກງານການຄົ້ນຄວ້າວິທະຍາສາດ. ໄລຍະທີ 2 ເປັນການຄົ້ນຄວ້າໃນຮູບແບບການສຳຫຼວດຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູ-ອາຈານກ່ຽວກັບສະພາບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ໂດຍໃຊ້ແບບສອບຖາມທີ່ສ້າງຂຶ້ນຈາກອົງປະກອບ ແລະ ຕົວຊີ້ວັດຈາກໄລຍະທີ 1. ໄລຍະທີ 3 ເປັນການພັດທະນາລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ໂດຍການປັບໃຊ້ເທັກນິກເດວຟາຍ (Delphi technique) ຜ່ານຜູ້ຊ່ຽວຊານ 2 ຮອບຄື: ຮອບທີ 1 ຜູ້ຄົ້ນຄວ້າ ຮ່າງແບບສອບຖາມຕາມອົງປະກອບ ແລະ ຕົວຊີ້ວັດທີ່ຜ່ານການຢືນຢັນຈາກຜູ້ຊ່ຽວຊານຈາກໄລຍະທີ 1 ມາສ້າງເປັນແບບສອບຖາມແບບມາດຕາສ່ວນປະມານຄ່າ 5 ລະດັບ ໂດຍການຊອກຫາຄ່າມັດທະຍະຖານ (Median: Med.) ແລະ ຄ່າພິໄສຄວາທາຍ (Interquaretile Range: IQR). ຮອບທີ 2 ຜູ້ຄົ້ນຄວ້າ ຮ່າງລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ຕາມອົງປະກອບ ແລະ ຕົວຊີ້ວັດທີ່ໄດ້ຈາກຮອບທີ 1 ແລ້ວນຳໄປໃຫ້ຜູ້ຊ່ຽວຊານຢືນຢັນລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ຜ່ານກອງປະຊຸມສຳມະນາກັບຜູ້ຊ່ຽວຊານ. ໄລຍະທີ 4 ເປັນການຢືນຢັນລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ. ກ່ອນຈະຢືນຢັນລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ແມ່ນລະບົບດັ່ງກ່າວຈະຖືກນຳສະເໜີຕໍ່ຜູ້ຄຸ້ມຄອງລະບົບກໍຄືຄະນະນຳຄະນະບໍດີ, ຄະນະພະແນກຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ ແລະ ຜູ້ນຳໃຊ້ລະບົບກໍຄືຄູ-ອາຈານສອນພາຍໃນຄະນະສຶກສາສາດ ມຊ. ຫຼັງຈາກນັ້ນ ຈະໄດ້ດຳເນີນການປະເມີນລະບົບ ຕາມວິທີການປະເມີນຂອງ Stufflebeam (1981) ເຊິ່ງລວມມີ 4 ດ້ານຄື: ຄວາມຖືກຕ້ອງ, ຄວາມເໝາະສົມ, ຄວາມເປັນໄປໄດ້ ແລະ ຄວາມເປັນປະໂຫຍດຂອງລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ໂດຍຜູ້ທີ່ຄຸ້ມຄອງ ແລະ ນຳໃຊ້ລະບົບ

2.1 ປະຊາກອນ ແລະ ກຸ່ມຕົວຢ່າງ

ໄລຍະທີ 1: ກຸ່ມຜູ້ໃຫ້ຂໍ້ມູນໃນການສັງເຄາະ ແລະ ຢືນຢັນອົງປະກອບ ແລະ ຕົວຊີ້ວັດຂອງລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ແບ່ງອອກເປັນ 2 ລະດັບ ລວມທັງໝົດ 9 ທ່ານຄື: ກຸ່ມທີ 1 ແມ່ນຄະນະຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການຂອງ ມຊ ໂດຍໃຊ້ວິທີການເລືອກແບບເຈາະຈົງ (Purposive sampling) ຈຳນວນ 2 ທ່ານ ສຳລັບການເກັບຂໍ້ມູນຜ່ານການສຳພາດ. ກຸ່ມທີ 2 ແມ່ນຫົວໜ້າພະແນກຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການວິຊາການຂອງ ມຊ 7 ຄະນະ (ຈຳນວນ 7 ທ່ານ) ໂດຍໃຊ້ວິທີການເລືອກແບບເຈາະຈົງ (Purposive sampling).

ໄລຍະທີ 2: ກຸ່ມຕົວຢ່າງສຳລັບການສຶກສາສະພາບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ແມ່ນກຸ່ມຄູ-ອາຈານສອນທັງໝົດ ຈາກຈຳນວນ 1,302 ຄົນ ມາກຳນົດຂະໜາດກຸ່ມຕົວຢ່າງ ຕາມສູດການຄິດໄລ່ຂອງ Yamane (1973, as cited in Uakarn, Chaokromthong & Sintao, 2021) ໄດ້ກຸ່ມຂະໜາດຂອງກຸ່ມຕົວຢ່າງແມ່ນ 306 ຄົນ.

ໄລຍະທີ 3: ໃນການພັດທະນາລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ, ຜູ້ຄົ້ນ ຄວ້າໄດ້ແບ່ງຜູ້ຊ່ຽວຊານອອກເປັນກຸ່ມຕາມແຕ່ລະຮອບຄື: ຮອບທີ 1 ແມ່ນຜູ້ຊ່ຽວຊານທີ່ເປັນຄະນະຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການມະຫາວິທະຍາໄລແຫ່ງຊາດ ຈຳນວນ 2 ທ່ານ ແລະ ຫົວໜ້າພະແນກຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການຂອງຄະນະວິຊາ ຈຳນວນ 13 ທ່ານ ລວມທັງໝົດ 15 ທ່ານ ໂດຍການເລືອກແບບເຈາະຈົງ (Purposive sampling) ເພື່ອກວດສອບຄວາມເໝາະສົມຂອງອົງປະກອບ ແລະ ຕົວຊີ້ວັດຈາກແບບສອບຖາມ. ຮອບທີ 2 ແມ່ນຜູ້ຊ່ຽວຊານ ທີ່ເປັນຮອງອະທິການບໍດີ ມຊ ທີ່ເປັນຜູ້ຊີ້ນຳວຽກງານຄົ້ນຄວ້າວິທະຍາສາດ ຈຳນວນ 1 ທ່ານ, ຫົວໜ້າຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ ຈຳນວນ 1 ທ່ານ, ຫົວໜ້າສູນຄົ້ນຄວ້າອາຊີ ຈຳນວນ 1 ທ່ານ, ຄະນະກຳມະການກອງທຶນວິທະຍາສາດສາຍສັງຄົມ ຈຳນວນ 1 ທ່ານ ແລະ ຫົວໜ້າພະແນກຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການຈາກ 13 ຄະນະ ຈຳນວນ 13 ທ່ານ ໂດຍໃຊ້ວິທີການເລືອກແບບເຈາະຈົງ (Purposive sampling) ລວມທັງໝົດຈຳນວນ 17 ທ່ານ ເພື່ອຢືນຢັນລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊຜ່ານກອງປະຊຸມສຳມະນາ.

ໄລຍະທີ 4: ໃນການຢືນຢັນລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ, ຜູ້ຄົ້ນຄວ້າແບ່ງກຸ່ມຕົວຢ່າງອອກເປັນ 2 ກຸ່ມຄື:

– ກຸ່ມທີ 1 ແມ່ນກຸ່ມທີ່ເປັນຜູ້ຄຸ້ມຄອງລະບົບ ທີ່ເປັນຫົວໜ້າຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິ ການວິຊາການ

ມຊ 1 ທ່ານ ແລະ ຫົວໜ້າພະແນກຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການຂອງ 7 ຄະນະວິຊາ ລວມທັງໝົດຈຳນວນ 8 ທ່ານ;

– ກຸ່ມທີ 2 ແມ່ນກຸ່ມຜູ້ທີ່ນຳໃຊ້ລະບົບ ເຊິ່ງໄດ້ແກ່ຄູ-ອາຈານສອນ ຈຳນວນ 40 ຄົນ.

ການເລືອກຜູ້ໃຫ້ຂໍ້ມູນໃນການປະເມີນຄວາມຖືກຕ້ອງ, ຄວາມເໝາະສົມ, ຄວາມເປັນໄປໄດ້ ແລະ ຄວາມເປັນປະໂຫຍດຂອງລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ແມ່ນໃຊ້ວິທີການເລືອກແບບເຈາະຈົງ (Purposive sampling) ເຊິ່ງລວມທັງ 2 ກຸ່ມ ມີຈຳນວນທັງໝົດ 48 ຄົນ.

## 2.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ

ໄລຍະທີ 1: ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນແມ່ນແບບສຳພາດ ແບບເຄິ່ງໂຄງສ້າງ (Semi-structured interview) ເພື່ອສັງເຄາະຄວາມຄິດເຫັນເພີ່ມເຕີມກ່ຽວກັບອົງປະກອບ ແລະ ຕົວຊີ້ວັດຂອງລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ.

ໄລຍະທີ 2: ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນແມ່ນແບບສອບຖາມ ເພື່ອສຶກສາສະພາບການບໍລິຫານການຄົ້ນຄວ້າວິທະຍາສາດຂອງມະຫາວິທະຍາໄລແຫ່ງຊາດ ເຊິ່ງເປັນແບບສອບຖາມແບບປະມານຄ່າ 5 ລະດັບ (Rating scale) ຂອງ Likert.

ໄລຍະທີ 3: ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນແບ່ງອອກເປັນ 2 ຊຸດຄື: ແບບສອບຖາມຊຸດທີ 1 ເປັນແບບສອບຖາມ ເພື່ອກວດສອບຄວາມເໝາະສົມ ແລະ ຄວາມເປັນໄປໄດ້ຂອງລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ເປັນຮູບແບບປະມານຄ່າ 5 ລະດັບ (Rating scale) ຂອງ Likert ເລີ່ມຈາກຄວາມເໝາະສົມ ແລະ ເປັນໄປໄດ້ໃນລະດັບຫຼາຍທີ່ສຸດຫາຄວາມເໝາະສົມ ແລະ ເປັນໄປໄດ້ໃນລະດັບໜ້ອຍທີ່ສຸດ. ເຄື່ອງມືຊຸດທີ 2 ປະກອບມີ: ຮ່າງລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ແລະ ເອກະສານປະກອບການສຳມະນາເຊັ່ນ: ຮ່າງໃຫ້ຄະແນນ ແລະ ຮ່າງໃຫ້ຄຳເຫັນ ພ້ອມໃບລົງທະບຽນ.

ໄລຍະທີ 4: ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນໄດ້ແກ່ແບບສອບຖາມ ເພື່ອກວດສອບຄວາມຖືກຕ້ອງ, ຄວາມເໝາະສົມ, ຄວາມເປັນໄປໄດ້ ແລະ ຄວາມເປັນປະໂຫຍດ ສຳລັບປະເມີນລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ.

## 2.3 ວິທີເກັບກຳຂໍ້ມູນ

ວິທີການລົງເກັບກຳຂໍ້ມູນແຕ່ລະໄລຍະປະຕິບັດຕາມຂັ້ນຕອນທີ່ຄ້າຍຄືກັນ ຄື: ຂໍໜັງສືພົວພັນວຽກຈາກຄະນະບໍດີ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ, ນຳເອົາໜັງສືພົວພັນວຽກໄປພົວພັນກັບພາກສ່ວນທີ່ກ່ຽວຂ້ອງ, ພົວພັນກຸ່ມຜູ້ໃຫ້ຂໍ້ມູນ ເພື່ອຊີ້ແຈງຈຸດປະສົງແລ້ວທຳການເກັບຂໍ້ມູນຕາມຈຸດປະສົງທີ່ວາງໄວ້.

## 2.4 ການສ້າງ ແລະ ການຫາຄຸນນະພາບຂອງເຄື່ອງມື

ຜູ້ຄົ້ນຄວ້າໄດ້ດຳເນີນການສ້າງ ແລະ ຫາຄຸນນະພາບຂອງເຄື່ອງມື (ແບບສອບຖາມ ແລະ ແບບສຳພາດ) ໂດຍອາໄສການກວດຜ່ານຈາກຜູ້ຊ່ຽວຊານ ແລະ ຄູທີ່ປຶກສາ ແລະ ຄູຜູ້ຊ່ວຍທີ່ປຶກສາສຳລັບໄລຍະທີ 1, ໄລຍະທີ 3 ແລະ 4. ສຳລັບໄລຍະທີ 2 ແມ່ນມີການຫາຄຸນນະພາບຂອງເຄື່ອງມືຕາມຂັ້ນຕອນ ດັ່ງນີ້:

– ນຳເອົາອົງປະກອບ ແລະ ຕົວຊີ້ວັດທີ່ໄດ້ຈາກໄລຍະທີ 1 ມາສ້າງເປັນແບບສອບຖາມປະມານຄ່າ 5 ລະດັບ (Rating scale) ຂອງ Likert ຕາມເກນຄະແນນລຸ່ມນີ້:

ລະດັບ 5 ໝາຍເຖິງ ເຫັນດີທີ່ສຸດ/ມີລະດັບການຈັດຕັ້ງປະຕິບັດຫຼາຍທີ່ສຸດ

ລະດັບ 4 ໝາຍເຖິງ ເຫັນດີ/ມີລະດັບການຈັດຕັ້ງປະຕິບັດຫຼາຍ

ລະດັບ 3 ໝາຍເຖິງ ປານກາງ/ມີລະດັບການຈັດຕັ້ງປະຕິບັດປານກາງ

ລະດັບ 2 ໝາຍເຖິງ ບໍ່ເຫັນດີ/ມີລະດັບການຈັດຕັ້ງປະຕິບັດຕັ້ງໜ້ອຍ

ລະດັບ 1 ໝາຍເຖິງ ບໍ່ເຫັນດີທີ່ສຸດ/ມີລະດັບການຈັດຕັ້ງປະຕິບັດໜ້ອຍທີ່ສຸດ

– ນຳແບບສອບຖາມໃຫ້ຄູທີ່ປຶກສາ ແລະ ຄູຜູ້ຊ່ວຍມທີ່ປຶກສາຜ່ານ ແລະ ມີຄຳເຫັນປັບປຸງ;

– ນຳແບບສອບຖາມໃຫ້ຜູ້ຊົງຄຸນວຸດທິຈຳນວນ 5 ທ່ານ ເພື່ອພິຈາລະນາຄວາມຖືກຕ້ອງທາງດ້ານເນື້ອໃນ (Content validity) ແລະ ຄວາມຖືກຕ້ອງທາງດ້ານໂຄງສ້າງ (Construct validity);

– ນຳຄ່າຄະແນນທີ່ໄດ້ ມາຫາຄ່າດັດຊະນີຄວາມສອດຄ່ອງລະຫວ່າງຂໍ້ຄຳຖາມ ແລະ ຈຸດປະສົງຂອງການຄົ້ນຄວ້າ (Index of Item Objective Congruence: IOC) ຊຶ່ງເຫັນວ່າແຕ່ລະຂໍ້ຄຳຖາມມີຄ່າ IOC = 1.00 .

– ນຳແບບສອບຖາມທີ່ປັບປຸງແລ້ວໄປທົດລອງໃຊ້ (Try out) ກັບກຸ່ມຄູ-ອາຈານສອນ ທີ່ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ (ທີ່ບໍ່ຊໍ້າກັບກຸ່ມຕົວຢ່າງ) ຈຳນວນ 30 ຄົນ;

– ນຳເອົາຂໍ້ມູນທີ່ໄດ້ຈາກກຸ່ມທົດລອງມາວິເຄາະ ແລ້ວຊອກຫາຄ່າຄວາມເຊື່ອໝັ້ນ (Reliability) ຂອງແບບສອບຖາມໂດຍໃຊ້ຄ່າສຳປະສິດອານຟາຕາມວິທີການຂອງ ຄຣອນບາກ (Cronbach's Alpha Coefficient) ຊຶ່ງເຫັນວ່າຄ່າຄວາມໜ້າເຊື່ອຖືແມ່ນເທົ່າກັບ 0.97;

– ປັບປຸງແກ້ໄຂແບບສອບຖາມໃຫ້ຖືກຕ້ອງເໝາະສົມ ແລະ ຈັດພິມສະບັບສົມບູນ.

## 2.5 ວິທີການວິເຄາະຂໍ້ມູນ

ຂໍ້ມູນທີ່ໄດ້ຈາກແບບສອບຖາມຖືກນຳມາວິເຄາະຂໍ້ມູນໂດຍໃຊ້ໂປແກມສຳເລັດຮູບ SPSS ເພື່ອຫາຄ່າຄວາມຖີ່, ຄ່າສ່ວນຮ້ອຍ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ, ຄ່າມັດທະຍະຖານ ແລະ ຄ່າພິໄສຄວາຫາຍ. ສຳລັບຂໍ້ມູນທີ່ໄດ້ຈາກການສຳພາດແມ່ນນຳມາວິເຄາະເນື້ອໃນ (Content anlysis) ແລະ ຈັດລຽງເປັນໝວດໝູ່.

## 3. ຜົນໄດ້ຮັບ

ຜົນໄດ້ຮັບຈາກການພັດທະນາລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ຈະຖືກນຳສະເໜີແຍກເປັນຕາມແຕ່ລະໄລຍະດັ່ງນີ້:

ໄລຍະທີ 1: ຈາກການສັງເຄາະເອກະສານ, ທິດສະດີ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ ແລະ ການສຳພາດຜູ້ບໍລິຫານທີ່ກ່ຽວຂ້ອງກັບວຽກງານການຄົ້ນຄວ້າວິທະຍາສາດ ລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ສາມາດແບ່ງອອກເປັນ 4 ອົງປະກອບ (65 ຕົວຊີ້ວັດ). ປັດໄຈນຳເຂົ້າ (14 ຕົວຊີ້ວັດ), ຂະບວນການ (42 ຕົວຊີ້ວັດ), ຜົນຜະລິດ (5 ຕົວຊີ້ວັດ) ແລະ ຂໍ້ມູນປ້ອນກັບ (4 ຕົວຊີ້ວັດ),

ໄລຍະທີ 2: ຈາກການສຳຫຼວດຄວາມຄິດເຫັນຂອງຄູ-ອາຈານກ່ຽວກັບສະພາບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ໂດຍໃຊ້ແບບສອບຖາມ ພົບວ່າສະພາບການການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ພົບວ່າປັດໄຈນຳເຂົ້າແມ່ນຈັດຢູ່ໃນລະດັບກາງຫາດີ ($\bar{x}$ = 3.70, S.D. = 0.67) ແຕ່ຍັງມີຂໍ້ຈຳກັດທາງດ້ານງົບປະມານ ແລະ ຄູ່ມືແນະນຳການຄົ້ນຄວ້າ. ດ້ານຂະບວນການໂດຍລວມເຫັນວ່າມີການດຳເນີນການໃນລະດັບຂ້ອນຂ້າງດີ ($\bar{x}$ = 3.77, S.D. = 0.63) ແຕ່ຍັງມີບັນຫາໃນຂະບວນການຕິດຕາມ ແລະ ປະເມີນຜົນ ແລະ ການນາເອົາຜົນຂອງການຄົ້ນຄວ້າໄປໃຊ້ທີ່ເຫັນວ່າບໍ່ທັນເຮັດໄດ້ດີເທົ່າທີ່ຄວນ. ໃນດ້ານຜົນໄດ້ຮັບພົບວ່າເປັນໄປຕາມມາດຖານ ($\bar{x}$ = 3.74, S.D. = 0.69) ແຕ່ຖືວ່າຍັງບໍ່ທັນເປັນທີ່ຍອມຮັບເທົ່າທີ່ຄວນໃນເລື່ອງຂອງຄວາມໜ້າເຊື່ອຖື. ໃນດ້ານຂໍ້ມູນປ້ອນກັບເຫັນວ່າ ມຊ ເຫັນວ່າຢູ່ໃນລະດັບດີ ($\bar{x}$ = 3.71, S.D. = 0.76) ເຫັນວ່າມີການຖອດຖອນບົດຮຽນແຕ່ຍັງບໍ່ທັນໄດ້ແກ້ໄຂບັນຫາທີ່ຄົງຄ້າງໄດ້ດີເທົ່າທີ່ຄວນ.

ໄລຍະທີ 3: ການພັດທະນາລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ໂດຍການປັບໃຊ້ເທັກ ນິກເດວຟາຍ (Delphi technique) ຜ່ານຜູ້ຊ່ຽວຊານ 2 ຮອບຄື: ຮອບທີ 1 ຜູ້ຄົ້ນຄວ້າ ຮ່າງແບບສອບຖາມຕາມອົງປະກອບ ແລະ ຕົວຊີ້ວັດທີ່ຜ່ານການຢືນຢັນຈາກຜູ້ຊ່ຽວຊານຈາກໄລຍະທີ 1 ແລະ ຮອບທີ 2 ຜູ້ຄົ້ນຄວ້າ ຮ່າງລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ຕາມອົງປະກອບ ແລະ ຕົວຊີ້ວັດທີ່ໄດ້ຈາກຮອບທີ 1 ແລ້ວນຳໄປໃຫ້ຜູ້ຊ່ຽວຊານຢືນຢັນລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ຜ່ານກອງປະຊຸມສຳມະນາກັບຜູ້ຊ່ຽວຊານ. ຜົນຂອງການຄົ້ນຄວ້າສາມາດສະຫຼຸບໄດ້ວ່າ ລະບົບການບໍລິຫານການຄົ້ນຄວ້າວິທະຍາ ສາດຂອງ ມຊ ລວມມີ 4 ອົງປະກອບ (59 ຕົວຊີ້ວັດ) ຄື: ປັດໄຈນຳເຂົ້າ (13 ຕົວຊີ້ວັດ), ຂະບວນການ (ແບ່ງອອກເປັນ 5 ຂະບວນການຍ່ອຍທີ່ມີ 38 ຕົວຊີ້ວັດ), ຜົນຜະລິດ (4 ຕົວຊີ້ວັດ) ແລະ ຂໍ້ມູນປ້ອນກັບ ພ້ອມດ້ວຍຄູ່ມືການນຳໃຊ້ (4 ຕົວຊີ້ວັດ) ດັ່ງແຜນວາດລຸ່ມນີ້:




ໄລຍະທີ 4: ຈາກການປະເມີນລະບົບລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ຕາມວິທີການປະເມີນຂອງ Stufflebeam (1981) ໂດຍລວມພົບວ່າ ມີຄວາມເໝາະສົມ, ຄວາມເປັນໄປໄດ້, ຄວາມຖືກຕ້ອງ ແລະ ຄວາມເປັນປະໂຫຍດຢູ່ໃນລະດັບຫຼາຍຫາຫຼາຍທີ່ສຸດ. ຜູ້ຕອບແບບສອບຖາມມີຄວາມຄິດເຫັນວ່າ ລະບົບດັ່ງກ່າວມີຄວາມເປັນປະໂຫຍດ ແລະ ມີຄວາມຖືກຕ້ອງຫຼາຍທີ່ສຸດ ໃນຂະນະທີ່ດ້ານດ້ານຄວາມເໝາະສົມ ແລະ ຄວາມເປັນໄປໄດ້ຖືກຈັດໃນລະດັບຫຼາຍຕາມລຳດັບ.

## 4. ວິພາກຜົນ

ລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ໄດ້ຖືກພັດທະນາຂຶ້ນມາຕາມ 4 ໄລຍະຄື: ການສຶກສາອົງປະກອບ ແລະ ຕົວຊີ້ວັດຂອງລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ, ການສຶກສາສະພາບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ, ການພັດທະນາລະບົບການບໍລິຫານການຄົ້ນຄວ້າວິທະ ຍາສາດຂອງ ມຊ ແລະ ການປະເມີນລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ. ຈາກຜົນຂອງການຄົ້ນຄວ້າເຫັນວ່າມີບາງປະເດັນສຳຄັນທີ່ສາມາດຍົກອະພິປາຍໂດຍສະເພາະຈາກໄລຍະທີ 2 ແລະ ທີ 3 ດັ່ງນີ້: ສະພາບ

ການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ຕາມ 4 ອົງປະກອບມີດັ່ງນີ້:

**ປັດໄຈນໍາເຂົ້າ**: ໂດຍລວມດ້ານປັດໄຈນໍາເຂົ້າຂອງລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຖືວ່າຢູ່ໃນລະດັບພໍໃຊ້ໄດ້. ເຖິງຢ່າງໃດກໍ່ຕາມ ສິ່ງທີ່ເຫັນວ່າ ເປັນອຸປະສັກໃນການບໍລິຫານຄົ້ນຄວ້າວິທະຍາສາດແມ່ນງົບປະມານ ແລະ ການຈັດສັນງົບປະມານ ເຊິ່ງມີຜົນຕໍ່ການເຂົ້າເຖິງສິ່ງອໍານວຍຄວາມສະດວກຕ່າງໆ ເປັນຕົ້ນແມ່ນການຂາດອຸປະກອນ, ຫ້ອງທົດລອງ ແລະ ເຄື່ອງມືທີ່ທັນສະໄໝ ພ້ອມກັບການສ້າງ ແລະ ສະໜອງເອກະສານຄູ່ມືການເຮັດການຄົ້ນຄວ້າ. ຂໍ້ຈໍາກັດທາງດ້ານງົບປະມານໃນການຄົ້ນຄວ້າວິທະຍາສາດນີ້ ສອດຄ່ອງກັບແນວຄິດຂອງ Kamalakanan (2024); Nguyen & Tran, (2021) ທີ່ເຫັນວ່າ ງົບປະມານມີຜົນຕໍ່ຂີດຄວາມສາມາດຂອງນັກຄົ້ນຄວ້າ ແລະ ການພັດທະນາປະເທດຊາດໃນພາບລວມ. ນອກຈາກນັ້ນ, ຜົນຂອງການຄົ້ນຄວ້າຍັງສະແດງໃຫ້ເຫັນອີກວ່າລະບຽບການເງິນທີ່ມີຢູ່ໃນປັດຈຸບັນ ໂດຍກະຊວງການເງິນຍັງບໍ່ທັນສອດຄ່ອງກັບນະໂຍບາຍສົ່ງເສີມການຄົ້ນຄວ້າວິທະຍາສາດຂອງກະຊວງສຶກສາທິການ ແລະ ກິລາ ເຊິ່ງເຮັດໃຫ້ນັກຄົ້ນຄວ້າມີຄວາມຫຍຸ້ງຍາກໃນການບໍລິຫານການຄົ້ນຄວ້າ ວິທະຍາສາດຂອງຕົນເອງ ເຊິ່ງສອດຄ່ອງກັບບົດລາຍງານຂອງກົມການສຶກສາຊັ້ນສູງ ກະຊວງສຶກສາທິການ ແລະ ກິລາ (Department of Higher Education, 2022).

**ຂະບວນການ:** ດ້ານຂະບວນການປະກອບດ້ວຍ 5 ຂະບວນການຍ່ອຍຄື: ການສະເໜີບົດໂຄງການຄົ້ນຄວ້າ, ການຕິດຕາມ ແລະ ປະເມີນຜົນ, ການປະເມີນ ແລະ ຮັບຮອງຜົນການຄົ້ນຄວ້າ, ການຕີພິມລົງວາລະສານ ແລະ ການນໍາໃຊ້ຜົນການຄົ້ນຄວ້າ. ຈາກຜົນຂອງການຄົ້ນຄວ້າໃນດ້ານນີ້ ເຫັນວ່າຂະບວນການຕ່າງໆໄດ້ມີການຈັດຕັ້ງປະຕິບັດຢ່າງເປັນປົກກະຕິ. ເຖິງຢ່າງໃດກໍຕາມເຫັນວ່າຫຼາຍຂະບວນການກໍຍັງມີສິ່ງທ້າທາຍທີ່ຕ້ອງໄດ້ຮັບການປັບປຸງ ເປັນຕົ້ນແມ່ນຂະບວນການນໍາໃຊ້ຜົນຂອງການຄົ້ນຄວ້າ. ຈາກປະເດັນດັ່ງກ່າວ Poiroux et al. (2024) ໄດ້ສະຫຼຸບໃຫ້ເຫັນວ່າ ຊ່ອງຫວ່າງບັນຫາຂອງການຄົ້ນຄວ້າແມ່ນການຄົ້ນຄວ້າສິ່ງໃໝ່ ແລະ ການນໍາເອົາຄວາມຮູ້ ໃໝ່ທີ່ໄດ້ເພື່ອເອົາໄປນໍາໃຊ້ ເຊິ່ງສິ່ງດັ່ງກ່າວນີ້ສະທ້ອນໃຫ້ເຫັນເຖິງການລະບົບທີ່ຂາດການເຊື່ອມໂຍງກັບນະໂຍບາຍໄປສູ່ການຈັດຕັ້ງປະຕິບັດ. ນອກຈາກນີ້ ຍັງເຫັນວ່າບັນຫາທີ່ພົບເຫັນຍັງກ່ຽວຂ້ອງກັບການຂຽນບົດສະເໜີໂຄງການ ຄົ້ນຄວ້າວິທະຍາສາດເປັນຕົ້ນແມ່ນການໃຫ້ຄໍາຄິດເຫັນ ເພື່ອປັບປຸງຈາກຄະນະກໍາມະການຜ່ານບົດສະ ເໜີ ແລະ ເຫັນວ່າຍັງຂາດກົນໄກໃນການຕິດຕາມ ແລະ ປະເມີນຜົນການດໍາເນີນການຄົ້ນຄວ້າ. ຕໍ່ປະເດັນນີ້ Gupta & Chavan (2022) ແລະ Alshurman & Qasrawi (2023) ໄດ້ໃຫ້ຄວາມເຫັນທີ່ສອດຄ່ອງກັນຄືການຂາດລະບົບກົນໄກໃນການຕິດຕາມກວດກາການຄົ້ນຄວ້າທີ່ດີຈະສົ່ງຜົນດ້ານລົບຕໍ່ຄຸນນະພາບຂອງການຄົ້ນຄວ້າ. ນອກຈາກນັ້ນແລ້ວ ຍັງຈະເຮັດໃຫ້ເກີດຄວາມສັບສົນກ່ຽວກັບທິດທາງຂອງການຄົ້ນຄວ້າ ພ້ອມກັບສົ່ງຜົນຕໍ່ກັບມາດຕະຖານຂອງການຄົ້ນຄວ້າ.

**ຜົນໄດ້ຮັບ:** ພາບລວມກ່ຽວກັບຜົນໄດ້ຮັບຂອງການຄົ້ນຄວ້າແມ່ນຖືວ່າຢູ່ໃນລະດັບທີ່ໃຊ້ໄດ້. ເຖິງຢ່າງໃດກໍຕາມ ຜົນໄດ້ຮັບບາງຄັ້ງຍັງເຫັນວ່າບໍ່ມີຄວາມໜ້າເຊື່ອຖືເທົ່າທີ່ຄວນ ເຊິ່ງອາດເນື່ອງມາຈາກການຂາດການຕິດຕາມຂະບວນການຄົ້ນຄວ້າຢ່າງເປັນລະບົບເຊັ່ນ: ການຂາດການຄວບຄຸມໃນການເກັບກໍາຂໍ້ມູນ, ກຸ່ມຕົວຢ່າງທີ່ຈໍາກັດເກີນໄປ ລວມໄປເຖິງການຂາດຈັນຍາບັນຂອງຕົວຜູ້ຄົ້ນຄວ້າເອງ ເຊິ່ງຜົນການຄົ້ນຄວ້ານີ້ສອດຄ່ອງກັບ Poiroux et al. (2024). ບໍ່ພຽງແຕ່ເທົ່ານັ້ນ ຜົນໄດ້ຮັບສ່ວນໜຶ່ງຍັງບໍ່ທັນສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມໂດຍກົງ. ຕໍ່ບັນຫານີ້ Kamalakanan (2024) ຢືນຢັນວ່າການຂາດຍຸດທະສາດທີ່ດີໃນການນໍາເອົາຜົນຂອງການຄົ້ນຄວ້າໄປໃຊ້ໃຫ້ເກີດປະ ໂຫຍດໄດ້ໃນຕົວຈິງ ຈະເຮັດໃຫ້ຄຸນຄ່າຂອງການຄົ້ນ ຄວ້າຫຼຸດລົງ ແລະ ສົ່ງຜົນກະທົບຕໍ່ການພັດທະນາໄດ້ໜ້ອຍລົງເຊັ່ນດຽວກັນ.

**ຂໍ້ມູນປ້ອນກັບ:** ໂດຍລວມແລ້ວການປັບປຸງວຽກງານການຄົ້ນຄວ້າວິທະຍາສາດແມ່ນໄດ້ຈັດຕັ້ງປະຕິບັດຜ່ານການຈັດກອງປະຊຸມ ປຶກສາຫາລື ແລະ ຖອດຖອນບົດຮຽນຮ່ວມກັນກັບພາກສ່ວນທີ່ກ່ຽວຂ້ອງ. ເຖິງຢ່າງໃດກໍຕາມ ໃນຄວາມເປັນຈິງ ບັນຫາ ແລະ ສິ່ງທ້າທາຍທີ່ຄ້າງຄາຍັງບໍ່ທັນໄດ້ຖືກນໍາໄປແກ້ໄຂໃຫ້ດີເທົ່າທີ່ຄວນ. ທັງນີ້ອາດເກີດຈາກການຂາດລະບົບກົນໄກໃນການຕິດຕາມການແກ້ໄຂບັນຫາທີ່ເປັນຮູບປະທໍາ. ຕໍ່ປະເດັນນີ້ ນັກວິຊາການຫຼາຍທ່ານ ໄດ້ມີຄໍາເຫັນວ່າຄວນມີລະບົບກົນໄກໃນການຕິດຕາມ ເພື່ອຢັ້ງຢືນວ່າບັນຫາ ແລະ ສິ່ງທ້າທາຍທີ່ຄ້າງຄາຕ່າງໆນັ້ນໄດ້ຮັບການແກ້ໄຂຢ່າງຖືກວິທີ ແລະ ມີປະສິດທິພາບແທ້ (Poiroux et al., 2024; Bennett & Lemoine, 2021). ນອກຈາກນັ້ນ, ການແກ້ໄຂບັນຫາ ຍັງຈໍາເປັນຕ້ອງໄດ້ລວມເອົາທຸກພາກສ່ວນທີ່ກ່ຽວຂ້ອງເຂົ້າມາມີບົດບາດໃນການຄົ້ນຄິດ ແລະ ຊອກຫາວິທີການແກ້ໄຂໃຫ້ຖືກຕ້ອງສອດຄ່ອງທີ່ສຸດ. ເຊັ່ນດຽວກັນກັບ Liao (2011) ແລະ Mirza &Roberts (2024) ທີ່ໄດ້ກ່າວວ່າ ການນໍາເອົາທຸກພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ພາຍນອກ ເຂົ້າມີບົດບາດໃນການແລກປ່ຽນບົດຮຽນກ່ຽວກັບບໍລິຫານການຄົ້ນຄວ້າ ວິທະຍາສາດເປັນສິ່ງທີ່ດີ ເພື່ອສ້າງເຄືອຂ່າຍໃນການແລກປ່ຽນຊັບພະຍາກອນ ແລະ ບຸກຄະລາກອນ.

ເມື່ອພິຈາລະນາເຖິງລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ທີ່ໄດ້ຮັບການພັດທະນາຂຶ້ນມາໃນໄລຍະ 3 ພົບວ່າ ອົງປະກອບຫຼັກ 4 ດ້ານ (ປັດໄຈນໍາເຂົ້າ, ຂະບວນການ, ຜົນຜະລິດ ແລະ ຂໍ້ມູນປ້ອນກັບ) ແລະ ອົງປະກອບຍ່ອຍຂອງຂະບວນການ 5 ດ້ານ (ການສະເໜີບົດໂຄງການຄົ້ນຄວ້າ, ການຕິດຕາມ ແລະ ປະເມີນຜົນ, ການປະເມີນ ແລະ ຮັບຮອງຜົນການຄົ້ນຄວ້າ, ການຕີພິມລົງວາລະສານ ແລະ ການນໍາໃຊ້ຜົນການຄົ້ນຄວ້າ) ຍັງຄົງຮັກສາໄວ້ແບບເກົ່າທຽບກັບໄລຍະທີ 1 ຈາກການສຶກສາອົງປະກອບ ແລະ ຕົວຊີ້ວັດທີ່

ສັງເຄາະມາຈາກຈາກເອກະສານ ແລະ ການສຳພາດ. ເຖິງຢ່າງໃດກໍຕາມ ຈາກການຜ່ານກອງປະຊຸມຜູ້ຊ່ຽວຊານ ເຫັນວ່າຕົວຊີ້ວັດຂອງລະບົບມີການປັບປຸງເລັກນ້ອຍ ເພື່ອຄວາມເໝາະສົມຕາມບໍລິບົດການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ. ເມື່ອພິຈາລະນາຈາກລະບົບການບໍລິຫານຄົ້ນຄວ້າວິທະຍາສາດຂອງ ມຊ ແລ້ວເຫັນວ່າ ມີຄວາມຄ້າຍຄືກັບລະບົບການບໍລິຫານການຄົ້ນຄວ້າວິທະຍາສາດສໍາລັບມະຫາວິທະຍາໄລສ້າງຄູໃນປະເທດໄທ ທີ່ແບ່ງອົງປະກອບຫຼັກອອກເປັນ 4 ດ້ານ ແຕ່ມີອົງປະກອບຍ່ອຍ ແລະ ຕົວຊີ້ວັດທີ່ແຕກຕ່າງກັນຂ້ອນຂ້າງຫຼາຍ ເຖິງແມ່ນວ່າເປົ້າໝາຍຂອງການຄົ້ນຄວ້າຈະຄືກັນ ກໍ່ຄືການເຮັດການຄົ້ນຄວ້າທີ່ມີປະສິດ ທິພາບ ແລະ ນໍາໄປໃຊ້ໃຫ້ເກີດປະໂຫຍດໄດ້ຢ່າງແທ້ຈິງ (Chomphuviset, 2016).

## 5. ສະຫຼຸບ

ລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ລວມມີ 4 ອົງປະກອບ (61 ຕົວຊີ້ວັດ) ຄື: ປັດໄຈນໍາເຂົ້າ (13 ຕົວຊີ້ວັດ), ຂະບວນການ (ການສະເໜີບົດໂຄງການຄົ້ນຄວ້າ, ການຕິດຕາມ ແລະ ປະເມີນຜົນ, ການປະເມີນ ແລະ ຮັບຮອງຜົນການຄົ້ນຄວ້າ, ການຕີພິມລົງວາລະສານ ແລະ ການນໍາໃຊ້ຜົນການຄົ້ນຄວ້າ ລວມມີ 40 ຕົວຊີ້ວັດ), ຜົນຜະລິດ (4 ຕົວຊີ້ວັດ) ແລະ ຂໍ້ມູນປ້ອນກັບ ພ້ອມດ້ວຍຄູ່ມືການນໍາໃຊ້ (4 ຕົວຊີ້ວັດ). ລະບົບດັ່ງກ່າວໄດ້ຮັບການປະເມີນ ແລະ ຜົນຂອງການປະເມີນໂດຍລວມພົບວ່າລະບົບການບໍລິຫານການຄົ້ນຄວ້າ
ວິທະຍາສາດ ມີປະໂຫຍດ ແລະ ມີຄວາມຖືກຕ້ອງໃນລະດັບຫຼາຍທີ່ສຸດໃນຂະນະທີ່ດ້ານດ້ານຄວາມເໝາະສົມ ແລະ ຄວາມເປັນໄປໄດ້ຖືກຈັດໃນລະດັບຫຼາຍຕາມລໍາດັບ.

**ຂໍ້ສະເໜີແນະ**

- ຈາກຜົນຂອງການສຶກສາສະພາບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ເຮັດໃຫ້ຮູ້ວ່າຍັງມີຫຼາຍດ້ານທີ່ຕ້ອງໄດ້ຮັບການປັບປຸງ ໂດຍສະເພາະແມ່ນດ້ານການຈັດສັນງົບປະມານ (ເພີ່ມງົບປະມານ ແລະ ລະບຽບການຈັດສັນ), ການສະໜອງຄູ່ມືແນະນໍາການຄົ້ນຄວ້າ (ຂະບວນການ ຫຼື ກົນໄກຕ່າງໆຂອງການຄົ້ນຄວ້າ), ການປັບປຸງຄວາມສອດຄ່ອງຂອງລະບຽບການເງິນກັບການເຮັດການຄົ້ນຄວ້າ ໄປພ້ອມກັບການແກ້ໄຂບັນຫາ ແລະ ສິ່ງທ້າທາຍທີ່ຄ້າງຢູ່ຢ່າງເປັນລະບົບ.
- ລະບົບການບໍລິຫານການຄົ້ນຄວ້າວິທະຍາສາດທີ່ຖືກພັດທະນາຂຶ້ນມາຈະເປັນປະໂຫຍດສູງທີ່ສຸດເມື່ອຖືກນໍາໄປຈັດຕັ້ງປະຕິບັດຕົວຈິງ ແລະ ໄດ້ຮັບການປັບປຸງໃຫ້ສອດຄ່ອງກັບບໍລິບົດຂອງການປ່ຽນແປງແຕ່ລະໄລຍະ.

ການຄົ້ນຄວ້າໃນຄັ້ງຕໍ່ໄປຄວນເປັນການຕໍ່ຍອດຈາກການ
ພັດທະນາລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ໂດຍການພັດທະນາລະບົບການປະເມີນການນໍາໃຊ້ລະບົບການບໍລິຫານການຄົ້ນຄວ້າວິທະຍາສາດຂອງ ມຊ ເພື່ອປັບປຸງການບໍລິຫານວຽກງານການຄົ້ນຄວ້າວິທະຍາສາດຂອງ ມຊ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າ ຂໍປະຕິຍານຕົນວ່າຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Alshurman, M., & Qasrawi, K. (2023). Research Funding and Institutional Support: An Analysis of Middle-Income Countries. *Science & Technology Policy Journal, 12*(6), 455-467.

Bennett, N., & Lemoine, G. J. (2021). Adaptive feedback in research development: Building resilience in evolving research ecosystems. *Journal of Research Management, 19*(2), 102-118.

Chomphuviset, K. (2016). *The Development of Research Management for Teacher Education Institutes.* Mahasarakham: Mahasarakham University.

Department of Higher Education. (2022a). *Annual Report on Research Promotion Policies.* Vientiane Capital: Ministry of Education and Sports, Vientiane.

Department of Higher Education. (2022b). *Research Promotion in Higher Education Report.* Vientiane Capital: Department of Higher Education.

Gupta, D., & Chavan, P. (2022). Enhancing Feedback in Research Proposal Writing: Challenges and Solutions. *Journal of General Education and Humanities, 25*(3), 198-210.

Kamalakanan, N. (2024). Challenges in Research Funding for National Development. *Journal of Development Studies, 32*(4), 101-110.

Liao, H. (2011.). The Role of Research Networks in Enhancing Research Quality. *Journal of General Education and Humanities, 18*(1), 45-60.

Ministry of Education and Sports. (2015). *Vision to the Year 2030, Strategy to the Year 2025 and Education Sector Development Plan VIII (2016-2020).* Vientiane Capital: Ministry of Education and Sports.

Ministry of Education and Sports. (2016). *Strategy Plan for National Human Resource Development to 2025.* Vientiane Capital: Ministry of Education and Sports.

Ministry of Education and Sports. (2019). *Decree on Roles and Responsibilities of Higher Education Department.* Vientiane Capital: Ministry of Education and Sports.

Ministry of Education and Sports. (2021). *Education and Sports Sector Development Plan IX (2021-2025).* Vientiane Capital: Ministry of Education and Sports.

Mirza, P., & Roberts, J. (2024). Addressing Research Methodology Gaps in Social Science Research. *Journal of General Education and Humanities, 4*(20).

National Assembly. (2021). *Lao Revolutionary Party Conference Report (XI).* Vientiane Capital: National Assembly.

National Science Council Office. (2023). *Direction to Research Promotion in Higher Education.* Vientiane Capital: National Science Council Office.

National University of Laos. (2020). *Decree on Roles and Responsibilities of Research and Academic Service Office of the National University of Laos.* Vientiane Capital: Research and Academic Service Office.

National University of Laos. (2021). *Report on the Implementation of Research Management of the National University of Laos.* Vientiane Capital: National University of Laos.

Nguyen, T. L., & Tran, B. T. (2021). Financial barriers in the research landscape of developing countries: Challenges and implications for capacity building. *Global Research and Development Journal, 7*(3), 210-222.

Poiroux, S., Dupont, A., Lefebvre, M. C., & Martin, J.-P. (2024). Bridging the Gap Between Research and Policy: A Review of Challenges. *International Journal of Research Impact, 29*(2), 55-68.